# ຄວາມຮູ້ພູມປັນທ້ອງຖິ່ນ

# "ການລ້ຽງງົວຊີນ"

(ສະບັບທົດລອງ)



ຂຽນໂດຍ: ນາງ ຈຸມມະລີ

ຂໍ້ມູນຈາກ: ບ້ານສົມສະໄໝ ເມືອງ ໄຊທານີ ນະຄອນຫລວງ

ປີ 2006

PDF created with pdfFactory Pro trial version www.pdffactory.com

# ປື້ມຄວາມຮູ້ພູມປັນຍາທ້ອງຖິ່ນ
# “ການລ້ຽງງົວຊິນ”

ຮີບໂຮມ ແລະຈັດໜ້າໂດຍ : ທ້າວ ຄຳຫຼ້າ ພອນມະນີວົງ

ແຕ້ມໂດຍ: ທ້າວ ຄຳຫຼ້າ ພອນມະນີວົງ

ຜູ້ຮຽບຮຽງ: ອ.ຈ ໂພໄຊ ຈັນທະວົງສາ

ອ.ຈ ເກດມະນີ ບັນດາສັກ

ອ.ຈ ຄຳໄຫວ

ອ.ຈ ລັງ ແສງດາລາ

ອ. ຈ ທອງຂັນ

ເຈົ້າຂອງ : ພະແນກສຶກສານະຄອນຫລວງວຽງຈັນ ແລະ
ສູນອົບຮົມຮ່ວມພັດທະນາ

PDF created with pdfFactory Pro trial version www.pdffactory.com

# ຄຳນຳ

ປື້ມພູມປັນຍາທ້ອງຖິ່ນຫົວນີ້ ໄດ້ມາຈາກການຂຽນຂອງຊາວບ້ານແລະ ອາສາສະໝັກຊຶ່ງໄດ້ຮຽບຮຽງເບື້ອງຕົ້ນຈາກຄະນະອຳນວຍການສູນອົບຮົມຮ່ວມພັດທະນາແລະພະແນກສຶກສານະຄອນຄອນຫຼວງວຽງຈັນ.

ປື້ມຫົວນ້ອຍຫົວນີ້ ໄດ້ບັນຈຸເອົາເນື້ອໃນທີ່ເວົ້າເຖິງຫົວຂໍໃດໜຶ່ງໂດຍມີຫຼາຍກິດຈະກຳທີ່ຈະເປັນການທົດລອງເອົາຄວາມຮູ້ທ້ອງຖິ່ນເຂົ້ານຳພາ ແລະ ສິດສອນນັກຮຽນຊັ້ນປະຖົມໂດຍເອົາບົດທີ່ງ່າຍສອນຊັ້ນ ປໍ1 ປໍ 2 ແລະ ບົດທີ່ຍາກກໍສອນຊັ້ນໃຫຍ່ຂື້ນໄປ.

ຄະນະຈັດທຳຄິດວ່າປື້ມຫົວນີ້ຄົງເປັນບ່ອນອີງອັນໜຶ່ງໃຫ້ແກ່ຄູອາຈານກໍຄືອາສາສະໝັກທີ່ຈະໄປສອນເດັກປະຖົມບໍ່ຫຼາຍກໍໜ້ອຍ.

ຄະນະຈັດທຳຄິດວ່າຍັງມີຫຼາຍເນື້ອໃນທີ່ຍັງບໍ່ທັນພຽງພໍ ແລະຂາດໄປຫັວງວ່າຄົງໄດ້ຮັບການຕິຊົມຈາກທຸກທ່ານພວກເຮົາພ້ອມທີ່ຈະປັບປຸ່ງຕາມຄວາມເໝາະສົມ.

ຄະນະຈັດທຳ

PDF created with pdfFactory Pro trial version www.pdffactory.com

# ຄວາມເປັນມາ

ການລ້ຽງງົວຊົນແມ່ນມີມາແຕ່ສະໄໝປູ່ຍ່າຕາຍາຍເພີ່ນລ້ຽງງົວນີ້ເພື່ອແຂ່ງຂັນຍາມບຸນກິນຈຽງ,ການລ້ຽງງົວຊົນແມ່ນລ້ຽງແບບເອົາໃຈໃສ່ດູແລເປັນພິເສດ ແລະກໍມີຄວາມຫຍຸ້ງຍາກຫຼາຍ ເພາະຕ້ອງໄດ້ໄປກ່ຽວຫຍ້າໃຫ້ມັນກິນຢູ່ສະເໝີຈະບໍ່ໄດ້ປ່ອຍຕາມລຳພັງຄືກັບງົວອື່ນໆ ຄອກທີ່ງົວຊົນ ຢູ່ຕ້ອງສະອາດເປັນຄອກແບບເຮືອນ ແລະຕ້ອງແມ່ນງົວຊົນພຽງໂຕ ດຽວເທົ່ານັ້ນ,ຢູ່,ພື້ນຂອງມັນບໍ່ສູງປານໃດປະມານ 20-30 Cmແລະຕ້ອງມີຮາງສຳລັບໃສ່ຫຍ້າໃຫ້ງົວກິນ. ຄອກຂອງ ມັນຕ້ອງອະນາໄມຢູ່ສະເໝີ ຫຼັງຈາກໃຫ້ອາຫານແລ້ວຕ້ອງ ເອົາເກືອໃຫ້ມັນກິນ ຈັກໜ້ອຍ ໜຶ່ງພໍໃຫ້ງົວເຊື່ອຟັງຜູ້ເປັນ ເຈົ້າຂອງ .ງົວຕ້ອງເປັນງົວໂຕໃຫຍ່,ຫົວໃຫຍ່, ເຂົາທັງສອງເບື້ອງໃຫຍ່ ແຂງແຮງ ແລະຄົມດີ,ຂາທັງ 4 ຂາໃຫຍ່.ເມື່ອມີງານປະເພນີບຸນກິນຈຽງເພີ່ນກໍຈະເອົາງົວຊົນນີ້ມາຊົນກັນເພື່ອສ້າງບັນຍາກາດໃຫ້ທຸກຄົນໄດ້ເບິ່ງ,ນອກຈາກນັ້ນຍັງເປັນການແຂ່ງຂັນຊົນງົວວ່າງົວໃຜຈະຊົນໄດ້ດີ,ຖ້າງົວໂຕໃດຊົນໄດ້ຊະນະຖືວ່າເຈົ້າຂອງງົວໂຕນັ້ນແມ່ນ ມີຊື່ສຽງນອກຈາກນັ້ນການຊົນງົວຍັງເຮັດໃຫ້ບັນດາຜູ້ມາເບິ່ງນັ້ນໄດ້ ມີຄວາມມ່ວນຊື່ນ ແລະໄດ້ເຫັນບຸນປະເພນີຂອງຊົນເຜົ່າອີກດ້ວຍ ແລະເຈົ້າຂອງງົວກໍມີຄວາມພາກພູມໃຈທີ່ໄດ້ງົວດີ ແລະງົວຊົນເກັ່ງ.

PDF created with pdfFactory Pro trial version www.pdffactory.com

# ອຸປະກອນໃນການເຮັດຄອກງົວ

ໄມ້ກົມ



ໄມ້ແປ້ນ



ຫຍ້າ



PDF created with pdfFactory Pro trial version www.pdffactory.com

ສັງກະສີ, ໄມ້ຟ້າ, ໄພຫຍ້າ



ເຫຼັກຕະປູ



ຄ້ອນຕີ



PDF created with pdfFactory Pro trial version www.pdffactory.com

ພ້າ



ເລື່ອຍ



## v ວິທີເຮັດຄອກງົວ

1 ຂຸດຂຸມ 4 ຂຸມ

2 ຝັງເສົາ

3 ເຮັດໂຄງຫຼັງຄາ ແລະມຸງ

4 ແອ້ມຝາໃສ່ແລ້ວມຸງວິທີແອ້ມແມ່ນແອ້ມແບບຫ່າງໆ ຈັ່ງຕະປູໄວ້ ເພື່ອໃຫ້ງົວໄດ້ປ່ອນຫົວອອກມາກິນຫຍ້າຢູ່ໃນຮາງຂ້າງນອກ.

PDF created with pdfFactory Pro trial version www.pdffactory.com

**ຫຼັກການທີ່ສຳຄັນ**

- ການລ້ຽງງົວຊົນແມ່ນເຮົາຕ້ອງເລືອກເອົາງົວທີ່ມີໜອກໃຫຍ່ ແລະ ຂາທາງໜ້າໃຫຍ່.ຄວນເລືອກເອົາງົວທີ່ມີເຂົາແຫຼມ ແລະເຂົາບໍ່ ກວ້າງ ຫຼາຍເວລາຊົນມັນຈະຖືກດີ ແລະເວລາງົວນັ້ນຊົນກັນມັນຈະໃຊ້ ກຳລັງ ຂາທາງໜ້າຫຼາຍໃນການຍັນຫຼືຄ້ຳ.

## ກາບ: ງົວໂຕໃຫຍ່

ງົວຂອງຂ້ອຍ ນີ້ມີຫລາຍໂຕ
ເອົາໄວ້ໄຊ ແຕ່ໂຕໃຫຍ່ໆ
ຍາມປີໃໝ່ ມີການຊົນງົວ
ບໍ່ໄດ້ຕົວະ ຢາກເຫັນມາເບິ່ງ
ມ່ວນລື່ນເລີງ ເຫັນງົວຊົນກັນ
ມັນສຸກສັນ ທັງຊົນທັງຮ້ອງ
ຍາດພີ່ນ້ອງ ຂອງຊົນເຜົ່າເຮົາ
ຍັງບໍ່ເຊົາ ພາກັນຊົນງົວ

ແຕ່ງໂດຍ: ນາງ ຈູມມະນີ

PDF created with pdfFactory Pro trial version www.pdffactory.com

## ເຊີ້ງ: ງົວຊົນ

ມາພວກເຮົາມາ ມາເບິ່ງງົວຊົນ
ມີຜູ້ມີຄົນ ໃນເດີ່ນວັນນີ້
ມີມາທຸກປີ ປະເພນີເດີມ
ຈົ່ງເອົາໃຈເສີມ ລົ້ງງງົວຊົນນີ້
ລົ້ງງໃຫ້ດີໆ ມີລາງວັນໃຫ້
ຍາມບຸນປີໃໝ່ ຂອງເຜົ່າລາວສູງ
ພວກປ້າແລະລຸງ ພາກັນມາເບິ່ງ
ເບິ່ງໃຫ້ເຕີດເຕີ່ງ ລື້ນເລີງສຳລານ

ແຕ່ງໂດຍ: ນາງ ຈູມມະນີ

## ເພງ: ງົວຊົນດີ

ງົວຊົນບ້ານເຮົາ ທັງຕຸ້ຍທັງພີ
ມັນຄັກອີ່ຫລີ ທັງພີທັງໃຫຍ່
ຜູ້ໃດລົ້ງງ ກໍໄດ້ເອົາໃຈໃສ່
ຈັ່ງແມ່ນດີໃຈ ເມື່ອໄດ້ເຫັນຊົນງົວ

PDF created with pdfFactory Pro trial version www.pdffactory.com

ແຕ່ງໂດຍ: ນາງ ຈູມມະນີ



ແລະ ປະຫວັດຂອງຜູ້ຂຽນ

ຊື່.ນາງ ຈູມມະນີ ນາມສະກຸນ ຈຳປາທອງ

ອາຊີບ.ພະນັກງານຄູ

**ເຫດຜົນຂອງການຂຽນປຶດ:**

ເພື່ອຢາກໃຫ້ອະນຸລັກວັດທະນະທຳອັນດັ້ງເດີມໄວ້ເພື່ອໃຫ້ຄົນຮຸນຫຼັງໄດ້ສືບທອດຕໍ່ໆໄປ ແລະກໍຖືວ່າການລ້ຽງງົວກໍເປັນອາຊີບເສີມເພື່ອສ້າງລາຍໄດ້ແລະເສດຖະກິດໃນຄອບຄົວ.

PDF created with pdfFactory Pro trial version www.pdffactory.com